# ສັ ນ ຍ າ
# ວ່າດ້ວຍ ການຂົນສົ່ງຜ່ານແດນ ທາງລົດ
# ລະຫວ່າງ
## ລັດຖະບານ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
## ແລະ ສາທາລະນະລັດ ປະຊາຊົນຈີນ

ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຝ່າຍນຶ່ງ ແລະ ລັດຖະບານ ແຫ່ງ ສາທາລະນະລັດ ປະຊາຊົນຈີນ ອີກຝ່າຍນຶ່ງ ຊຶ່ງຕໍ່ໄປນີ້ ເອີ້ນຫຍໍ້ວ່າ " *ຄູ່ສັນຍາ* ".

ເພື່ອເສີມຂະຫຍາຍ ສາຍພົວພັນມິດຕະພາບ, ຄວາມສາມະຄີ ທີ່ມີມູນເຊື້ອ ລະຫວ່າງ ສອງຊາດ ລາວ-ຈີນ ແລະ ເພີ້ມທະວີ ການຮ່ວມມື ທາງດ້ານເສດຖະກິດ ແລະ ການຄ້າ ບົນພື້ນຖານ ຕ່າງຝ່າຍຕ່າງມີຜົນ.

ດ້ວຍຄວາມປະສົງ ຢາກເສີມຂະຫຍາຍ ການຂົນສົ່ງ ໂດຍສານ ແລະ ສິນຄ້າ ທາງລົດ ລະຫວ່າງ ສອງປະເທດ.

## ຄູ່ສັນຍາ ຊຶ່ງໄດ້ຕົກລົງກັນດັ່ງຕໍ່ໄປນີ້ :

### <u>ມາດຕາ 01</u>

ສັນຍາສະບັບນີ້ ກວມທັງການຂົນສົ່ງ ໂດຍສານ, ນັບທັງນັກທ່ອງທ່ຽວ ແລະ ສິນຄ້າ ແບບປົກກະຕິ ແລະ ບໍ່ປົກກະຕິ ລະຫວ່າງ ສອງປະເທດ. ການຂົນສົ່ງ ຈະເປັນທາງລົດ ແລະ ໂດຍພາຫະນະຂົນສົ່ງ ທີ່ຂຶ້ນທະບຽນຢູ່ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຫລື ສາທາລະນະລັດ ປະຊາຊົນຈີນ.

### <u>ມາດຕາ 02</u>

2.1 ການຂົນສົ່ງໂດຍສານ ແບບປົກກະຕິ ໂດຍລົດໂດຍສານ ຈະຕ້ອງຈັດຕັ້ງ ໂດຍຂໍ້ຕົກລົງ ລະຫວ່າງ ອົງກອນ ທີ່ມີສິດອຳນາດ ຂອງຄູ່ສັນຍາ.

2.2 ເມື່ອຈັດຕັ້ງ ການຂົນສົ່ງປະເພດນີ້ ຄູ່ສັນຍາ ຈະຕ້ອງປ້ອນຂໍ້ມູນທີ່ຈຳເປັນ ໃຫ້ກັນ ແລະ ກັນໂດຍອົງກອນທີ່ມີສິດອຳນາດ ຂອງຄູ່ສັນຍາ ໃນເວລາອັນຄວນ. ຄູ່ສັນຍາຕ້ອງມີຂໍ້ມູນ ກ່ຽວກັບຊື່ ຂອງຜູ້ຂົນສົ່ງ ( ບໍລິສັດ ), ເສັ້ນທາງ, ຕາຕະລາງ ການເຄື່ອນໄຫວ, ອັດຕາຄ່າລົດ, ຈຸດຢຸດລົດ ເພື່ອໃຫ້ຜູ້ໂດຍສານຂຶ້ນ ແລະ ລົງ ແລະ ກຳນົດເວລາ ພ້ອມທັງຄວາມຖີ່ ຂອງຖ້ຽວລົດ.

### <u>ມາດຕາ 03</u>

3.1 ການປະຕິບັດການຂົນສົ່ງໂດຍສານ ແບບບໍ່ປົກກະຕິ ໂດຍລົດທົວ ລະຫວ່າງສອງປະເທດ ຈະຕ້ອງໄດ້ຮັບການອະນຸຍາດ ຈາກອົງກອນທີ່ມີສິດອຳນາດ ຂອງຄູ່ສັນຍາ, ແຕ່ຍົກເວັ້ນການຂົນສົ່ງ ທີ່ລະບຸໄວ້ໃນມາດຕາ 04 ຂອງສັນຍາສະບັບນີ້.

3.2 ອົງກອນ ທີ່ມີສິດອຳນາດ ຂອງຄູ່ສັນຍາ ຈະອອກໃບອະນຸຍາດ ສຳລັບຕອນທາງ ທີ່ຜ່ານດິນແດນຂອງປະເທດຕົນ.

3.3 ສຳລັບການຂົນສົ່ງ ໂດຍສານ ແບບບໍ່ປົກກະຕິ ໂດຍລົດທົວ ແຕ່ລະຖ້ຽວ ຈະຕ້ອງມີໃບອະນຸຍາດ ຊຶ່ງໃຫ້ສິດ ໄປ ແລະ ກັບ ໄດ້ເທື່ອດຽວ, ນອກເສຍຈາກວ່າ ມີຂໍ້ລະບຸໄວ້ຕ່າງຫາກ ໃນໃບອະນຸຍາດນັ້ນ.

3.4 ອົງກອນທີ່ມີສິດອຳນາດຂອງຄູ່ສັນຍາ ຈະຕ້ອງສົ່ງແບບຟອມໃບອະນຸຍາດ ໃຫ້ກັນ ແລະ ກັນ ເປັນລາຍປີ ຕາມຈຳນວນທີ່ໄດ້ຕົກລົງກັນໄວ້ ສຳລັບການຂົນສົ່ງໂດຍສານ ແບບບໍ່ປົກກະຕິ. ແບບຟອມນີ້ ຈະຕ້ອງປະທັບຕາ ແລະ ມີລາຍເຊັນ ຂອງອົງກອນ ທີ່ມີສິດອຳນາດ ອອກໃບອະນຸຍາດນັ້ນ.

3.5 ອົງກອນ ທີ່ມີສິດອຳນາດ ຂອງຄູ່ສັນຍາ ຈະຕ້ອງຕົກລົງກັນເອງ ກ່ຽວກັບວິທີການ ແລກປ່ຽນແບບຟອມ ໃບອະນຸຍາດນັ້ນ.

## ມາດຕາ 04

ເມື່ອມີການສັບປ່ຽນ ລົດທົວຄັນໃໝ່ ແທນລົດທົວທີ່ເປເພ, ໃບອະນຸຍາດທີ່ກ່າວໄວ້ໃນມາດຕາ 03 ຂອງສັນຍາສະບັບນີ້ ບໍ່ຈຳເປັນ ທີ່ຈະຕ້ອງເຮັດໃໝ່.

## ມາດຕາ 05

5.1 ການຂົນສົ່ງສິນຄ້າ ລະຫວ່າງສອງປະເທດ, ຍົກເວັ້ນການຂົນສົ່ງທີ່ລະບຸໄວ້ໃນມາດຕາ 06 ຂອງສັນຍາ ສະບັບນີ້, ຈະຕ້ອງເຮັດ ໂດຍລົດບັນທຸກສິນຄ້າ ພ້ອມດ້ວຍ ຫລື ປະສະຈາກລົດເທຣນເລີ ຫລື ລົດລາກແກ່ ພ້ອມດ້ວຍລົດເຄິ່ງເທຣນເລີ ຕາມໃບອະນຸຍາດທີ່ອອກໃຫ້ ໂດຍອົງກອນ ທີ່ມີສິດອຳນາດ ຂອງຄູ່ສັນຍາ.

5.2 ສຳລັບການຂົນສົ່ງສິນຄ້າ ແຕ່ລະຖ້ຽວຈະຕ້ອງມີໃບອະນຸຍາດ ຊຶ່ງໃຫ້ສິດ ໄປ ແລະ ກັບ ໄດ້ເທື່ອດຽວ, ນອກເສຍຈາກວ່າ ມີຂໍ້ລະບຸໄວ້ຕ່າງຫາກ ໃນໃບອະນຸຍາດນັ້ນ.

5.3 ອົງກອນທີ່ມີສິດອຳນາດຂອງຄູ່ສັນຍາ ຈະຕ້ອງສົ່ງແບບຟອມໃບອະນຸຍາດ ໃຫ້ກັນ ແລະ ກັນ ເປັນລາຍປີ ຕາມຈຳນວນທີ່ໄດ້ຕົກລົງກັນໄວ້ ສຳລັບການຂົນສົ່ງສິນຄ້າ, ແບບຟອມນີ້ ຈະຕ້ອງປະທັບຕາ ແລະ ມີລາຍເຊັນ ຂອງອົງກອນທີ່ມີສິດອຳນາດ ອອກໃບອະນຸຍາດນັ້ນ.

5.4 ອົງກອນທີ່ມີສິດອຳນາດ ຂອງຄູ່ສັນຍາ ຈະຕ້ອງຕົກລົງກັນເອງກ່ຽວກັບວິທີການແລກປ່ຽນແບບຟອມໃບອະນຸຍາດນັ້ນ.

## ມາດຕາ 06

6.1 ໃບອະນຸຍາດທີ່ລະບຸໄວ້ ໃນມາດຕາ 05 ຂອງສັນຍາສະບັບນີ້ ບໍ່ມີຄວາມຈຳເປັນ ສຳລັບການຂົນສົ່ງ ເຄື່ອງຕ່າງໆ ດັ່ງຕໍ່ລົງໄປນີ້:

ກ) ເຄື່ອງວາງສະແດງ, ອຸປະກອນ ແລະ ວັດຖຸ ສຳລັບຕະຫລາດນັດ ແລະ ການວາງສະແດງ;

ຂ) ພາຫະນະ, ສັດ, ອຸປະກອນຕ່າງໆ ແລະ ສິ່ງຂອງ ທີ່ຈະນຳໃຊ້ເຂົ້າ ໃນການສະແດງ ກິລາ, ແລະ ກິດຈະກຳທາງດ້ານວັດທະນະທຳ.

ຄ) ສົບ ຫລື ກະດູກ ຄົນຕາຍ;

ງ) ໄປສະນີພັນ;

ຈ) ພາຫະນະຂົນສົ່ງທາງລົດ ທີ່ເປ່ເພ;

ສ) ຊັບສົມບັດສ່ວນບຸກຄົນໃນເວລາຍົກຍ້າຍ;

ຊ) ສິນຄ້າ ທີ່ຈະຂົນສົ່ງ ຕາມທີ່ລະບຸໄວ້ໃນມາດຕາ 07 ຂອງສັນຍາສະບັບນີ້ ເຊິ່ງໄດ້ຮັບອະນຸຍາດພິເສດແລ້ວນັ້ນ.

6.2 ລົດທີ່ໃຊ້ ໃນການຊ່ວຍເຫລືອດ້ານວິຊາການ ທີ່ຜ່ານເຂົ້າອອກ ແມ່ນບໍ່ຕ້ອງການໃບອະນຸຍາດນີ້.

ສໍາລັບການຂົນສົ່ງ ທີ່ກ່າວມາຂ້າງເທິງນັ້ນ ຈະຕ້ອງມີເອກະສານການຂົນສົ່ງ ເຊິ່ງອອກໃຫ້ໂດຍ ອົງກອນພາຍໃນທີ່ມີສິດອໍານາດ ຂອງແຕ່ລະປະເທດ.

## ມາດຕ 07

7.1 ໃນເມື່ອຂະໜາດ ຫລື ນໍ້າໜັກ ຂອງພາຫະນະຂົນສົ່ງ ລວມທັງສິນຄ້າ ຫລືບໍ່ ກໍຕາມ ຫາກເກີນມາດຕະຖານທີ່ກໍານົດໄວ້ ໃນດິນແດນຂອງຄູ່ສັນຍາ ອີກຝ່າຍນຶ່ງ ແລະ ເຊັ່ນກັນ ເມື່ອທໍາການຂົນສົ່ງ ສິນຄ້າອັນຕະລາຍ, ຜູ້ຂົນສົ່ງ ຕ້ອງໄດ້ມີ ໃບອະນຸຍາດພິເສດ ຈາກອົງກອນ ທີ່ມີສິດອໍານາດຂອງຄູ່ສັນຍາ.

7.2 ຖ້າຫາກວ່າ ມີໃບອະນຸຍາດພິເສດ ຕາມທີ່ກ່າວໄວ້ໃນວັກ 7.1 ຂອງມາດຕາ 07 ນີ້, ຕ້ອງໄດ້ກໍານົດເສັ້ນທາງສະເພາະໃຫ້ ແລະ ການຂົນສົ່ງ ຕ້ອງໄປຕາມເສັ້ນທາງທີ່ກໍານົດໃຫ້ນັ້ນ.

## ມາດຕາ 08

8.1 ການຂົນສົ່ງທີ່ກ່າວໄວ້ ໃນສັນຍາສະບັບນີ້ ຈະມອບໃຫ້ຜູ້ຂົນສົ່ງ ທີ່ໄດ້ຮັບອະນຸຍາດ ທໍາການຂົນສົ່ງຜ່ານແດນ ໂດຍສອດຄ່ອງ ຕາມລະບຽບ ກົດໝາຍພາຍໃນປະເທດ ຂອງຜູ້ຂົນສົ່ງ,

8.2- ພາຫະນະຂົນສົ່ງ ທີ່ນໍາໃຊ້ເຂົ້າໃນການເຮັດ ການຂົນສົ່ງສາກົນ ຕ້ອງມີປ້າຍເລກທະບຽນ ແລະ ເຄື່ອງໝາຍຂົນສົ່ງ ຂອງປະເທດຕົນ ຢ່າງຈະແຈ້ງ.

## ມາດຕາ 09

ລະບຽບການຂົນສົ່ງສິນຄ້າ ແລະ ໂດຍສານ ຢູ່ຊາຍແດນນັ້ນ ອົງກອນທີ່ມີສິດອໍານາດ ຂອງຄູ່ສັນຍາ ຈະໄດ້ປຶກສາຫາລື ແລະ ຕົກລົງກັນ.

## ມາດຕາ 10

10.1 ຜູ້ຂົນສົ່ງບໍ່ມີສິດ ຂົນສົ່ງສິນຄ້າ ຫລື ຜູ້ໂດຍສານ ລະຫວ່າງສອງຈຸດ ທີ່ຕັ້ງຢູ່ໃນດິນແດນຂອງຄູ່ສັນຍາ ອີກຝ່າຍນຶ່ງ.

10.2 ຜູ້ຂົນສົ່ງໃດນຶ່ງ ຖ້າໄດ້ຮັບອະນຸຍາດ ເປັນພິເສດ ຈາກອົງກອນທີ່ມີສິດອໍານາດ ຂອງຄູ່ສັນຍາອີກຝ່າຍນຶ່ງ ສາມາດເຮັດການຂົນສົ່ງ ຈາກດິນແດນ ຂອງຄູ່ສັນຍາຝ່າຍນັ້ນ ໄປຍັງປະເທດທີສາມ ແລະ ຈາກປະເທດທີສາມ ເຂົ້າປະເທດ ຂອງຄູ່ສັນຍາ ຝ່າຍນັ້ນ ໄດ້ອີກເຊັ່ນກັນ.

## ມາດຕາ 11

ການຂົນສົ່ງສິນຄ້າ ທີ່ກ່າວໄວ້ໃນສັນຍາສະບັບນີ້ ຕ້ອງເຮັດຕາມໃບນຳສົ່ງສິນຄ້າ ຂອງແຕ່ລະຝ່າຍ ຂອງຄູ່ສັນຍາ, ສ່ວນແບບຟອມນັ້ນ ຕ້ອງເອົາຕາມແບບຟອມ ທີ່ສາກົນທົ່ວໄປຮັບເອົາ.

## ມາດຕາ 12

12.1 ຄົນຂັບລົດໂດຍສານ, ລົດທົວ ຫລື ລົດບັນທຸກສິນຄ້າ ຕ້ອງມີໃບຂັບຂີ່ ປະຈຳຊາດ ຫລື ສາກົນ ທີ່ສອດຄ່ອງກັບປະເພດລົດ ທີ່ຕົນຂັບຢູ່ນັ້ນ. ແລະ ຕ້ອງມີໃບທະບຽນລົດດັ່ງກ່າວ ຂອງປະເທດຕົນ.

12.2 ທຸກໃບອະນຸຍາດ ແລະ ເອກະສານ ທີ່ກ່ຽວຂ້ອງກັບການຂົນສົ່ງ ຕາມທີ່ໄດ້ລະບຸໄວ້ ໃນສັນຍາສະບັບນີ້ ຕ້ອງໄດ້ເອົາຕິດໄປນຳລົດ ແລະ ເມື່ອໃດຫາກມີການຮ້ອງຂໍ ຈາກອົງກອນທີ່ມີສິດອຳນາດກວດກາ ຈະຕ້ອງໄດ້ແຈ້ງ ເອກະສານເຫລົ່ານັ້ນໃຫ້ເບິ່ງ.

## ມາດຕາ 13

ບັນຫາລະອຽດ ກ່ຽວກັບການຂົນສົ່ງ ສິນຄ້າ ແລະ ໂດຍສານ ທີ່ກ່າວໄວ້ໃນສັນຍາສະບັບນີ້ ອາດຈະແກ້ໄຂກັນໂດຍກົງ ລະຫວ່າງອົງການ ແລະ ບໍລິສັດ ຂອງຄູ່ສັນຍາ.

## ມາດຕາ 14

ການສຳລະສະສາງ ຢູ່ໃນຂອບຄ່າຍ ຂອງສັນຍາສະບັບນີ້ ຈະຕ້ອງປະຕິບັດຕາມ ຂໍ້ລະບຸວ່າດ້ວຍການສຳລະສະສາງ ຊຶ່ງທັງສອງລັດຖະບານ ໄດ້ຕົກລົງກັນໄວ້ ໃນລະຍະໃດນຶ່ງ, ຫລື ຕາມຂໍ້ຕົກລົງ ກ່ຽວກັບການສຳລະສະສາງ ລະຫວ່າງອົງກອນ ທີ່ໄດ້ຮັບສິດອຳນາດ ຂອງຄູ່ສັນຍາ.

## ມາດຕາ 15

15.1 ໃນການທຳການຂົນສົ່ງ ບົນພື້ນຖານສັນຍາ ສະບັບນີ້ ວັດຖຸດັ່ງຕໍ່ລົງໄປນີ້ ເຊິ່ງນຳເຂົ້າໄປໃນດິນແດນຂອງຄູ່ສັນຍາອີກຝ່າຍນຶ່ງ ຈະຖືກຍົກເວັ້ນພາສີ, ອາກອນ ແລະ ບໍ່ຕ້ອງການໃບອະນຸຍາດ:

ກ) ນ້ຳມັນເຊື້ອໄຟເຊິ່ງຢູ່ໃນຖັງ ທີ່ຕິດມາກັບລົດ ແຕ່ລະປະເພດ ແລະ ທີ່ຖືກກັບລະບົບຫລໍ່ລ້ຽງເຄື່ອງຈັກ.

ຂ) ນ້ຳມັນລໍ່ລື່ນ ໃນຈຳນວນ ທີ່ຈຳເປັນສຳລັບການຂົນສົ່ງຖ້ຽວນັ້ນ.

ຄ) ເຄື່ອງອາໄຫລ່ ແລະ ເຄື່ອງມື ທີ່ຈຳເປັນ ເພື່ອສ້ອມແປງລົດ.

15.2 ເຄື່ອງອາໄຫລ່ ທີ່ບໍ່ໄດ້ໃຊ້ ຕ້ອງສົ່ງຄືນປະເທດ, ສ່ວນເຄື່ອງອາໄຫລ່ ທີ່ຖືກສັບປ່ຽນ ຄວນຖືກສົ່ງຄືນປະເທດ ຫລື ທຳລາຍ ຫລື ມອບໃຫ້ເຈົ້າຫນ້າທີ່ ທີ່ກ່ຽວຂ້ອງ ຕາມຂໍ້ກຳນົດຂອງຄູ່ສັນຍາ.

## ມາດຕາ 16

ລົດຂົນສົ່ງ ໂດຍສານ ແລະ ສິນຄ້າ ຕາມສັນຍາສະບັບນີ້ ຕ້ອງມີການປະກັນໄພ ບຸກຄົນທີສາມ. ຜູ້ຂົນສົ່ງ ຕ້ອງເຮັດການປະກັນໄພດັ່ງກ່າວລ່ວງຫນ້າ ກ່ອນຈະທຳການຂົນສົ່ງ.

## ມາດຕາ 17

ການກວດກາ ຢູ່ດ່ານຊາຍແດນ, ການກວດກາພາສີ ແລະ ອານາໄມກັນພະຍາດ ຈະຕ້ອງປະຕິບັດຕາມຂໍ້ຕົກລົງສາກົນ ເຊິ່ງຄູ່ສັນຍາໄດ້ເປັນສະມາຊິກ ຫລື ຕາມສັນຍາລະຫວ່າງສອງຝ່າຍ ແລະ ບັນຫາໃດທີ່ຂໍ້ຕົກລົງ ຫລື ສັນຍາ ຂ້າງເທິງນັ້ນໄດ້ກວມເອົາ ແມ່ນໃຫ້ປະຕິບັດຕາມລະບຽບກົດໝາຍ ຂອງແຕ່ລະປະເທດ.

## ມາດຕາ 18

ຄົນເຈັບໜັກ, ຜູ້ໂດຍສານ ທີ່ຢູ່ນຳລົດໂດຍສານປົກກະຕິ ແລະ ເຊັ່ນດຽວກັນກັບສັດ ແລະ ສິນຄ້າທີ່ເສຍດຸນ ເນົ່າເປື່ອຍໄວ້ ຈະຕ້ອງໄດ້ຮັບສິດກ່ອນ ໃນການກວດກາ ຢູ່ຊາຍແດນ, ການກວດກາພາສີ ແລະ ອານາໄມກັນພະຍາດ.

## ມາດຕາ 19

ຜູ້ຂົນສົ່ງຈາກປະເທດຄູ່ສັນຍາຕ້ອງປະຕິບັດຕາມກົດຈະລາຈອນ, ກົດໝາຍ ແລະ ລະບຽບການອື່ນໆ ຂອງປະເທດຊຶ່ງຕົນເອງກຳລັງແລ່ນລົດຢູ່ນັ້ນ.

## ມາດຕາ 20

ເພື່ອຮັບປະກັນ ໃຫ້ການປະຕິບັດສັນຍາສະບັບນີ້ ສຳເລັດຜົນ ອົງກອນທີ່ມີສິດອຳນາດ ຂອງຄູ່ສັນຍາ ຈະຕ້ອງພົບກັນໂດຍກົງ ແລະ ຕາມຄຳສະເໜີ ຂອງຝ່າຍໃດນຶ່ງ ຂອງຄູ່ສັນຍາ, ຕ້ອງປຶກສາຫາລືກັນ ເພື່ອຕັດສິນບັນຫາ ກ່ຽວກັບລະບົບໃບອະນຸຍາດ ການຂົນສົ່ງໂດຍສານ, ສິນຄ້າ, ການແລກປ່ຽນ ປະສົບປະການ ແລະ ຂ່າວສານຕ່າງໆ ກ່ຽວກັບການໃຊ້ໃບອະນຸຍາດ ທີ່ອອກໃຫ້ກັນ ແລະ ກັນ ໄປແລ້ວນັ້ນ.

## ມາດຕາ 21

ບັນຫາໃດທີ່ສັນຍາສະບັບນີ້ ບໍ່ໄດ້ກວມເອົາ ຫລື ສົນທິສັນຍາສາກົນ ເຊິ່ງຄູ່ສັນຍາເປັນພາຄີ ບໍ່ໄດ້ກວມເອົາ, ຈະຕ້ອງຖືກຕັດສິນໂດຍລະບຽບ ກົດໝາຍພາຍໃນ ຂອງຄູ່ສັນຍາແຕ່ລະຝ່າຍ.

## ມາດຕາ 22

ຄູ່ສັນຍາຈະຕ້ອງແກ້ໄຂທຸກບັນຫາ ທີ່ບໍ່ຈະແຈ້ງ ຊຶ່ງອາດຈະເກີດມາຈາກການຕີຄວາມໝາຍ ຫລື ການປະຕິບັດສັນຍາສະບັບນີ້, ໂດຍການເຈລະຈາ ແລະ ການປຶກສາຫາລືກັນ.

## ມາດຕາ 23

ສັນຍາສະບັບນີ້ ຈະບໍ່ມີຜົນສະທ້ອນເຖິງ ສິດ ແລະ ຂໍ້ບັງຄັບຕໍ່ຄູ່ສັນຍາ ທີ່ເກີດມາຈາກສົນທິ

ສັນຍາສາກົນອື່ນໆ ທີ່ຄູ່ສັນຍາໄດ້ເຊັນກັນ.

## ມາດຕາ 24

ເມື່ອປະຕິບັດ ສັນຍາສະບັບນີ້ ຄູ່ສັນຍາມອບໃຫ້ ອົງການທີ່ກ່ຽວຂ້ອງ ເຮັດອະນຸສັນຍາ ວ່າດ້ວຍການປະຕິຕົວຈິງນຳກັນ.

## ມາດຕາ 25

ສັນຍາສະບັບນີ້ ມີຜົນບັງຄັບໃຊ້ໄດ້ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ ແລະ ມີອາຍຸ 2 ປີ. ພາຍໃນ 6 ເດືອນ ກ່ອນຫມົດກຳນົດ ຂອງສັນຍາສະບັບນີ້ ຫາກຄູ່ສັນຍາຝ່າຍໃດນຶ່ງ ບໍ່ໄດ້ມີການຮ້ອງຂໍລົບລ້າງ ການປະຕິບັດຈະສືບຕໍ່ໄປໄດ້ອີກ 2 ປີ; ໃນເວລາດຽວກັນນັ້ນ ຫາກຄູ່ສັນຍາຝ່າຍໃດຝ່າຍນຶ່ງ ຮ້ອງຂໍໃຫ້ມີການດັດແປງ ຫລື ເພີ່ມເຕີມ ຈະຕ້ອງໄດ້ມີການປຶກສາຫາລື ເປັນເອກະພາບນຳກັນກ່ອນ ຈິ່ງປະຕິບັດໄດ້.

ສັນຍາສະບັບນີ້ ເຊັນກັນ ໃນວັນທີ.3....ເດືອນ ທັນວາ 1993 ຢູ່ທີ່....ປັກກິ່ງ......... ເຮັດເປັນ 2 ຕົ້ນສະບັບ ແລະ ເປັນ 3 ພາສາ ພາສາລາວ, ຈີນ ແລະ ອັງກິດ ເຊິ່ງທັງສາມພາສາ ມີຄຸນຄ່າເທົ່າທຽມກັນ. ຖ້າມີຄວາມບໍ່ເຂົ້າໃຈ ໃນການຕີຄວາມຫມາຍ ຕາມພາສາຂອງຄູ່ສັນຍາ ແມ່ນໃຫ້ອີງໃສ່ພາສາອັງກິດເປັນຫລັກ.

ຕາງຫນ້າ ລັດຖະບານ
ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ



ຕາງຫນ້າ ລັດຖະບານ
ແຫ່ງ ສາທາລະນະລັດ ປະຊາຊົນຈີນ

黄镇东